# ໂຄງການເພື່ອຄວາມສຳເລັດຂອງຄອບຄົວ

ກໍລະກົດ 2003

ໂຄງການເພື່ອຄວາມສຳເລັດຂອງຄອບຄົວມີບໍລິການສຳລັບຄອບຄົວທີ່ມີລາຍໄດ້ຕ່ຳ ເຊິ່ງລວມມີບໍລິການດັ່ງຕໍ່ໄປນີ້:

- ຊ່ວຍເຫຼືອເປັນເງິນສົດ ເອີ້ນອີກຢ່າງໜຶ່ງວ່າ ການຊ່ວຍເຫຼືອຊົ່ວຄາວສຳຫຼັບຄອບຄົວ (Temporary Assistance for Families -TAF)
- ຊ່ວຍຜູ້ໃຫຍ່ແກ້ໄຂບັນຫາໃນການຫາວຽກ
- ໃຫ້ການຊ່ວຍເຫຼືອສຳຫຼັບການຝຶກອົບຮົມໃນເລື່ອງວຽກ, ກິດຈະກຳຂອງວຽກ, ແລະ ການສຶກສາ

ໂຄງການຊ່ວຍຄອບຄົວເພີ່ມທັກສະຂອງເຂົາເຈົ້າ, ສ້າງຄວາມເຂັ້ມແຂງ, ແລະໃຫ້ເດັກໄດ້ຢູ່ໃນເຮືອນ.

ເພື່ອຮັບການຊ່ວຍເຫຼືອຈາກໂຄງການເພື່ອຄວາມສຳເລັດຄອບຄົວ, ຄອບຄົວນັ້ນຕ້ອງມີເດັກອາຍຸຕ່ຳກວ່າ 18 ປີ ຢ່າງນ້ອຍໜຶ່ງຄົນໃນຄອບຄົວ. ເດັກນ້ອຍອາດຈະເປັນເດັກທີ່ຍັງບໍ່ທັນເກີດ. ເດັກນ້ອຍອາດຈະຢູ່ນຳພໍ່ແມ່ ຫຼື ຍາດພີ່ນ້ອງ. ນອກນັ້ນເດັກອາດຈະຢູ່ນຳຜູ້ທີ່ສານມອບອຳນາດໃຫ້ດູແລເດັກນ້ອຍ ເຊັ່ນ: ຜູ້ປົກຄອງ, ຜູ້ປົກປັກຮັກສາ, ຫຼື ຜູ້ອາລັກຂາ.

ຄອບຄົວຕ້ອງມີລາຍໄດ້ ແລະ ຊັບສິນຕ່ຳ. ລາຍຮັບທັງຂອງເດັກ ແລະພໍ່ແມ່ຈະຖືກຄິດໄລ່ລວມກັນ. ລາຍໄດ້ ແລະ ຊັບສິນບາງປະເພດອາດຈະບໍ່ໄດ້ຄິດໄລ່. ຕົວຢ່າງມີດັ່ງນີ້:

- ເຮືອນທີ່ຄອບຄົວອາໃສຢູ່
- ສົມບັດລາຄາຕ່ຳກວ່າ $2,000
- ລົດ
- ເຄື່ອງແຕ່ງເຮືອນ, ເຄື່ອໃຊ້ສ່ວນຕົວ ແລະ ອຸປະກອນບາງຢ່າງ
- ເງິນຈຳນວນ $90 ບວກກັບ 40% ຂອງລາຍໄດ້

ຄອບຄົວອາດໄດ້ການຊ່ວຍເຫຼືອເປັນເງິນສົດໃນຂະນະທີ່ຫາວຽກເຮັດຖ້າພວກເຂົາມີເງື່ອນໄຂຕາມທີ່ກຳໜົດ. ນີ້ລວມທັງເງື່ອນໄຂຕາມໂຄງການຊ່ວຍເຫຼືອເດັກ. ຄອບຄົວສາມາດຮັບການຊ່ວຍເຫຼືອຈາກ TAF ພຽງແຕ່ 60 ເດືອນຕະຫຼອດຊີວິດ. ຄອບຄົວທີ່ໄດ້ຮັບການຊ່ວຍເຫຼືອຈາກ TAF ຍັງສາມາດໄດ້ຮັບການນຊ່ວຍເຫຼືອຄ່າຮັກສາ ແລະ ການດູແລເດັກ.

ລະດັບເງິນສົດທີ່ໄດ້ຂຶ້ນກັບລາຍຮັບຂອງຄອບຄົວ. ນອກຈາກນັ້ນຍັງຂື້ນກັບເຂດທີ່ຄອບຄົວນັ້ນອາໃສຢູ່. ຕະລາງລຸ່ມນີ້ສະແດງຈຳນວນເງິນສູງສຸດທີ່ຄອບຄົວອາດໄດ້ຮັບ.

| ການຈ່າຍການຊ່ວຍເຫຼືອເປັນເງິນສົດ | | | | |
|---|---|---|---|---|
| ຂະໜາດ ຄອບຄົວ | ເຂດຊົນນະບົດ | ຈຳນວນສູງສຸດ ຂອງເຂດຊົນນະບົດ | ເຂດມີປະຊາກອນສູງ | ຈຳນວນສູງສຸດຂອງ ເຂດມີປະຊາກອນ ສູງ |
| 1 | $224 | $229 | $241 | $267 |
| 2 | $309 | $314 | $326 | $352 |
| 3 | $386 | $391 | $403 | $429 |
| 4 | $454 | $459 | $471 | $497 |
| 5 ຫຼືຫຼາຍກວ່າ | ແຕ່ລະຄົນຈະໄດ້ຮັບ ເພີ່ມອີກ $61 | | | |

ຄອບຄົວຈະໄດ້ຮັບການບໍລິການຊ່ວຍເຫຼືອປະເພດອື່ນອີກເພື່ອຫຼຸດຜ່ອນພາລະຈາກການເຮັດວຽກ. ຄອບຄົວອາດໄດ້ຮັບບໍລິການຊ່ວຍເຫຼືອເປັນເງິນສົດແລະໄດ້ຮັບການຊ່ວຍເຫຼືອໃນປີທີ່ຢຸດຕິຮັບການຊ່ວຍເຫຼືອເປັນເງິນສົດ. ຄອບຄົວອາດໄດ້ຮັບການບໍລິການແລະການຊ່ວຍເຫຼືອແຕກຕ່າງກັນຕາມລາຍການດັ່ງນີ້:

ບໍລິການການຮຽນຮູ້ສຳຫຼັບຄົນພິການ, ບັນຫາຢາເສບຕິດ ຫຼື ເຫຼົ້າ, ຫຼື ຄວາມຮຸນແຮງໃນຄອບຄົວ
ບໍລິການຊ່ວຍເຫຼືອເລື່ອງການອ່ານ ແລະ ຄະນິດສາດ
ບໍລິການດ້ານສຸຂະພາບຈິດ
ບໍລິການດ້ານສຸຂະພາບຮ່າງກາຍ
ຊ່ວຍແກ້ປັນຫາທີ່ກ່ຽວກັບຄວາມພິການ
ຊ່ວຍໃຫ້ໄດ້ວຽກ ແລະ ຮັກສາວຽກນັ້ນໄວ້
ຊ່ວຍເຫຼືອພໍ່ແມ່
ຊ່ວຍດ້ານທັນຕະກຳ, ແວ່ນຕາ ແລະ ເຄື່ອງມືຊ່ວຍໃນການໄດ້ຍິນ
ຝຶກອົບຮົມດ້ານວຽກງານ
ຊ່ວຍໃຫ້ໄດ້ GED ຫຼືຮຽນພາສາອັງກິດ
ປະສົບການການເຮັດວຽກ
ຊ່ວຍການເດີນທາງໄປບ່ອນເຮັດວຽກ
ເສື້ອຜ້າ
ຊ່ວຍດ້ານຄວາມຕ້ອງການພື້ນຖານ
ການຂົນຍ້າຍທີ່ກ່ຽວຂ້ອງກັບວຽກງານ

ຜູ້ໃຫຍ່ທີ່ມີອາຍຸ 60 ປີຕ້ອງເຮັດຕາມໜຶ່ງໃນເງື່ອນໄຂລຸ່ມນີ້ເພື່ອໃຫ້ໄດ້ຮັບການຊ່ວຍເຫຼືອເປັນເງິນສົດສຳຫຼັບຄອບຄົວຂອງເຂົາເຈົ້າ:

ມີວຽກເຮັດ ຫຼື ເຮັດວຽກ
ເຂົ້າຮ່ວມໂຄງການເພື່ອຊ່ວຍຫຼຸດພາລະໃນການເຮັດວຽກ

ເບິ່ງແຍງເດັກນ້ອຍອາຍຸຕໍ່າກວ່າ 12 ເດືອນ
ເບິ່ງແຍງສະມາຊິກທີ່ພິການໃນຄົວເຮືອນ

ຜູ້ທີ່ບໍ່ຕ້ອງການມີວຽກເຮັດ ຫຼື ເຮັດວຽກອາດຈະຂໍບໍລິການໄດ້.

ການສະມັກ

ຄລິກບ່ອນນີ້ ເພື່ອສະມັກການບໍລິການຂອງພວກເຮົາ.

ສໍາຫຼັບການບໍລິການອື່ນໆ ຫຼື ຕ້ອງການຫາຫ້ອງການໃຫ້ບໍລິການດ້ານສັງຄົມ ແລະ ການຟື້ນຟູທີ່ໃກ້ບ້ານທ່ານ ໃຫ້ໃຊ້ລິ້ງໃນທ້າຍ ເພຈນີ້.

ກັບຄືນໜ້າຫຼັກ EES

ປັບປຸງ: ກັນຍາ 16, 2004